ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0028 /ຫອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 08 ມັງກອນ 2016

# ແຈ້ງການ

ເຖິງ : ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ........................................

ເລື່ອງ : ສະພາບການເຄື່ອນໄຫວປະຈຳປີ ຂອງສາຂາສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ, ຄພນ, ລົງວັນທີ 22/05/2015.
- ອີງຕາມ ທິດຊີ້ນຳຂອງລັດຖະມົນຕີຊ່ວຍ ວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 21/12/2015

ເພື່ອເກັບກຳສະພາບການດຳເນີນທຸລະກິດຂອງຊາວຕ່າງປະເທດ ທີ່ມາດຳເນີນທຸລະກິດຢູ່ໃນ ສປປ ລາວ ໃນຂອບເຂດທົ່ວປະເທດ ໃຫ້ສອດຄ່ອງຕາມເນື້ອໃນ ຂອງຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ,ຄພນ, ລົງວັນທີ 22/05/2015.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານດັ່ງນີ້:

1. ລາຍງານສະພາບການເຄື່ອນໄຫວປະຈຳປີຂອງສາຂາສະພາການຄ້າຕ່າງປະເທດທີ່ ຕັ້ງຢູ່ພາຍໃນແຂວງ, ນະຄອນຫຼວງຂອງຕົນ ຕາມສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ຂັ້ນແຂວງ ທີ່ກຳນົດໄວ້ໃນ ມາດຕາ 16 ໃນ ຂໍ້ຕົກລົງ ວ່າດ້ວຍສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ,ຄພນ, ລົງວັນທີ 22/05/2015;

2. ກວດຄືນການຂຶ້ນທະບຽນວິສາຫະກິດຂອງບັນດາຫົວໜ່ວຍທຸລະກິດຕ່າງປະເທດທີ່ເປັນສະມາຊິກຂອງສະພາການຄ້າຕ່າງປະເທດ ທີ່ຕັ້ງຢູ່ພາຍໃນແຂວງ ຂອງຕົນມີຈັກຫົວໜ່ວຍ, ໃນນີ້ໃຫ້ລາຍງານວ່າມີຈັກຫົວໜ່ວຍທີ່ຂຶ້ນທະບຽນວິສາຫະກິດແລ້ວ ແລະ ມີຈັກຫົວໜ່ວຍທີ່ຍັງບໍ່ທັນໄດ້ຂຶ້ນທະບຽນວິສາຫະກິດ;

3. ກວດຄືນເບິ່ງບັນດາສະພາການຄ້າຕ່າງປະເທດ ປະຈຳ ສປປລາວ ແລະ ສາຂາປະຈຳແຂວງຂອງທ່ານ ທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນຂໍ້ຕົກລົງ ຕາມມາດຕາ 23 ຂອງຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ,ຄພນ, ລົງວັນທີ 22/05/2015.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຮັກສາການຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ຂອນຫວັນ ບົນທະວົງ

ໝາຍເຫດ:

ຕິດຕໍ່ພົວພັນ ກົມການຄ້າພາຍໃນ

021 412436, 020 28038440 (ພະແນກ ພຕສ)